ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

ກົມສ້າງຄູ

ວິທະຍາໄລຄູ ດົງຄຳຊ້າງ

ເລກທີ 0645 /ວຄ.ດຄຊ

ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2026

## ໜັງສືແຈ້ງເຊີນເຂົ້າຮ່ວມປະມູນ

1. ວິທະຍາໄລຄູ ດົງຄຳຊ້າງ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ໂຄງການໂຄງການສ້ອມແປງອາຄານຫ້ອງຮຽນທີ່ເປ່ເພ 01 ຊັ້ນ ຂອງ ວິທະຍາໄລຄູ ດົງຄຳຊ້າງ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກ້ວາງພາຍໃນທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສປຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ບັນດາບໍລິສັດທີ່ມີຄຸນນະວຸດທີ່ເໝາະສົມ ເພື່ອເຂົ້າຮ່ວມ;
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ພະແນກບໍລິຫານ ແລະ ການເງິນ, ຂອງ ວິທະຍາໄລຄູ ດົງຄຳຊ້າງ ຕາມວັນເວລາລັດຖະການ;
5. ສຳລັບເອກະສານປະມູນຄົບຊຸດ ບໍລິສັດທີ່ສົນໃຈເຂົ້າຮ່ວມປະມູນ ສາມາດຕິດຕໍ່ພົວພັນໂດຍການຍື່ນໜັງສືສະເໜີ ຫາ ພະແນກບໍລິຫານ ແລະ ການເງິນ, ຂອງ ວິທະຍາໄລຄູ ດົງຄຳຊ້າງ ຕາມວັນເວລາລັດຖະການ; ເລີ່ມແຕ່ວັນທີ 19 ພຶດສະພາ ຫາ ວັນທີ 03 ກໍລະກົດ 2026, ໃນລາຄາຊຸດລະ 1,000,000 ກີບ (ໜຶ່ງລ້ານກີບ) ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
6. ສະຖານທີ່ສົ່ງຊອງປະມູນ ສົ່ງທີ່ ພະແນກບໍລິຫານ ແລະ ການເງິນ, ຂອງ ວິທະຍາໄລຄູ ດົງຄຳຊ້າງ ຕາມວັນເວລາລັດຖະການ; ສຳລັບວັນ ແລະ ເວລາເປີດຊອງປະມູນ ແມ່ນກຳນົດເອົາວັນທີ 03 ກໍລະກົດ 2026, ສຳລັບການສົ່ງຊອງປະມູນຈະບໍ່ອະນຸຍາດໃຫ້ສົ່ງມາທາງເອເລັກໂຕຼນິກ ແລະ ຊອງປະມູນໃດທີ່ສົ່ງຊ້າ ບໍ່ທັນຕາມເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ພ້ອມທັງສົ່ງຄືນ ໂດຍບໍ່ມີການພິຈາລະນາໃນການເປີດຊ່ອງ; ຊອງປະມູນທຸກໆຊອງຈະໄດ້ເປີດ ໂດຍຊ້ອງໜ້າຄະນະກຳມະການ ການປະມູນ ແລະ ຕາງໜ້າບໍລິສັດທີ່ເຂົ້າຮ່ວມປະມູນ;
7. ທຸກຊອງປະມູນຕ້ອງໄດ້ປະກອບມີການຄ້ຳປະກັນການປະມູນເປັນແຊັກເງິນສົດຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນທີ່ສະເໜີມາ.
8. ສະຖານທີ່ພົວພັນແມ່ນ: ພະແນກບໍລິຫານ ແລະ ການເງິນ, ຂອງ ວິທະຍາໄລຄູ ດົງຄຳຊ້າງ ຕັ້ງຢູ່ບ້ານ ດົງຄຳຊ້າງ, ເມືອງ ຫາດຊາຍຟອງ ນະຄອນຫຼວງວຽງຈັນ ຕາມວັນເວລາລັດຖະການ; ໂທລະສັບ 021 335 077 ຫຼື 020 22211582

ຜູ້ອຳນວຍການວິທະຍາໄລຄູ ດົງຄຳຊ້າງ

ສີພອນ ວັນນະລາດ

Siphone VANNALATH

สแกนด้วย CamScanner